ຄອບຄົວ

# WISe
Wraparound with Intensive Services



# ທົນທາງໃໝ່ເພື່ອຈະຕອບສະນອງຄວາມຕ້ອງການຂອງເດັກນ້ອຍຜູ້ທີ່ໄດ້ຮັບ **Apple Health Medicaid** ທີ່ມີບັນຫາສຸຂະພາບໂຣກຈິດຢູ່ໃນຣັດວໍຊິງຕັນ

## WISe ແມ່ນຫຍັງ?

WISe ແມ່ນການບໍຣິການຕາມສະມັກໃຈທີ່ໃຊ້ວິທີການຂອງຄະນະທີມງານເພື່ອຈະຕອບສະນອງຄວາມຕ້ອງການຂອງລູກຂອງທ່ານ. ມັນຈະເອົາໃຫ້ການປິ່ນປົວສຸຂະພາບໂຣກຈິດທີ່ເຂັ້ມຂົ້ນເພື່ອຈະອູ້ມຊູລູກຂອງທ່ານ ແລະ ຊ່ວຍເຫລືອຄອບຄົວຂອງທ່ານໃຫ້ບັນລຸເປົ້າໝາຍຂອງທ່ານ.

### ຈຸດເປົ້າໝາຍຂອງ WISe ແມ່ນ:

- ເພື່ອຈະເອົາການບໍຣິການສຸຂະພາບໂຣກຈິດທີ່ເຂັ້ມຂົ້ນໃຫ້ເພື່ອ ຈະຊ່ວຍເຫລືອລູກຂອງທ່ານແລະຄອບຄົວຂອງທ່ານໃນບັນລຸ ຜົນສຳເຣັດໃນຄວາມຢູ່ດີມີແຮງ, ຄວາມ ປອດພັຍ ແລະ ເພື່ອ ຈະ ເຮັດໃຫ້ຄວາມສັມພັນພາຍໃນ ຊຸມນຸມຊົນຂອງທ່ານແຂງ ແກ່ງຂຶ້ນ.
- ເພື່ອຈະອອກແບບແຜນການປິ່ນປົວສ່ວນບຸກຄົນ, ອີງ ຕາມ ຄວາມເຂັ້ມແຂງ ແລະ ຄວາມຕ້ອງການທີ່ໃຫ້ ຄວາມນັບຖື ໃນປະເພນີວັດທະນະທັມ, ຄຸນຄ່າ, ຄວາມປົກກະຕິ, ແລະ ຄວາມຊອບໃຈຂອງຄອບຄົວຂອງທ່ານ. ລູກ ແລະ ຄອບຄົວຂອງທ່ານນຳພາແຜນການໂດຍການ ໃຊ້ຄະນະທີມງານ. ສະມາຊິກຂອງຄະ ນະທີມງານລວມເອົາການອູ້ມຊູຕາມທັມມະຊາດ (ເຊັ່ນວ່າຄອບຄົວ, ໝູ່ ເພື່ອນ, ແລະ ຜູ້ນຳທາງ ສາສະນາ) ແລະ ຜູ້ຊ່ຽວຊານ ຜູ້ທີ່ເຮັດວຽກນຳຄອບຄົວຂອງ ທ່ານ (ເຊັ່ນວ່າຜູ້ປຶກສາ, ໂຮງຮຽນ, CPS, ແລະ ເຈົ້າໜ້າ ທີ່ຝາກໂທດ).
- ເພື່ອຈະໃຫ້ການບໍຣິການ ແລະ ການອູ້ມຊູຢູ່ໃນສະຖານທີ່ ແລະໃນເວລາທີ່ດີທີ່ສຸດສຳລັບລູກ ແລະ ຄອບຄົວຂອງທ່ານ (ລວມທັງຢູ່ໃນເຮືອນຂອງທ່ານ ຫລື ຢູ່ຕາມສະຖານທີ່ຢູ່ໃນ ຊຸມນຸມຊົນຕາມໃຈເລືອກຂອງທ່ານ, ແລະ ໃນຍາມແລງ ຫລື ວັນສຸດສັບປະດາ).
- ເພື່ອຈະຊີ້ບອກ ຫລື ເອົາໃຫ້ ແຫລ່ງຊ່ວຍເຫລືອ ແລະ ການ ອູ້ມຊູໃຫ້ແກ່ລູກ ແລະ ຄອບຄົວຂອງທ່ານ.
- ເພື່ອຈະໃຫ້ຄວາມຊ່ວຍເຫລືອໃນຣະຫວ່າງເວລາພາວະເດືອດ ຮ້ອນ. ທ່ານມີການເຂົ້າເຖິງການບໍຣິການໃນພາວະ ເດືອດຮ້ອນສຳລັບລູກຂອງທ່ານໄດ້ໃນທຸກໆເວລາຂອງມື້, 365 ວັນຕໍ່ປີ. ລູກຂອງ ທ່ານຈະໄດ້ຮັບການບໍຣິການຈາກບຸກຄົນຜູ້ທີ່ຮູ້ຈັກຄວາມຕ້ອງການຂອງລູກ ແລະ ຄອບຄົວຂອງທ່ານ ແລະ ສະພາບການ, ລວມທັງແຜນການພາວະເດືອດຮ້ອນປັດຈຸບັນຂອງເຂົາເຈົ້າ. ບໍ່ວ່າເມື່ອໃດຈະຈຳເປັນ, ອັນນີ້ລວມເອົາການເຂົ້າ ແຊກແຊງນຳໜ້າຕໍ່ໜ້າຢູ່ຕາມສະຖານທີ່ບ່ອນທີ່ພາວະ ເດືອດຮ້ອນເກີດຂຶ້ນ.

### ຫລັກການຂອງ WISe:

**ຄຸນຄ່າຂອງ WISe ທີ່ຊ່ວຍສົ່ງເສີມຜົນອອກມາສຳລັບເດັກນ້ອຍ:**

1. ປາກສຽງ ແລະ ທາງເລືອກຂອງຄອບຄົວ ແລະ ຊາວໜຸ່ມ
2. ອີງຕາມຄະນະທີມງານ
3. ການອູ້ມຊູຕາມທັມມະຊາດ
4. ການປະສານງານຮ່ວມມືກັນ
5. ອີງຕາມເຮືອນ ແລະ ຊຸມນຸມຊົນ
6. ກ່ຽວຂ້ອງນຳປະເພນີວັດທະນະທັມ
7. ສ່ວນບຸກຄົນ
8. ອີງຕາມຄວາມເຂັ້ມແຂງ
9. ອີງຕາມຜົນອອກມາ
10. ໂດຍບໍ່ມີເງື່ອນໄຂ

## ແມ່ນໃຜສາມາດໄດ້ຮັບ WISe?

WISe ຈະມີໄວ້ໃຫ້ແກ່ເດັກນ້ອຍ/ຊາວໜຸ່ມຜູ້ທີ່ມີເງື່ອນໄຂໄດ້ຮັບເມດິເຄດຕັ້ງແຕ່ກຳເນີດໄປເຖິງອາຍຸ 21 ປີຜູ້ທີ່ສອດຄ່ອງນຳມາດ ຕະຖານການເຂົ້າເຖິງການປິ່ນປົວ (Access to Care Standards) (ມາດຕະຖານທີ່ຖືກໃຊ້ໂດຍຫ້ອງການປິ່ນປົວ ສຸຂະ ພາບໃນການເອົາຣະດັບຂອງການບໍຣິການທີ່ຖືກຕ້ອງໃຫ້ບຸກຄົນ).

## ເມື່ອໃດຈະຊ່ວຍເຫລືອຂ້ອຍໄດ້ຫລາຍທີ່ຈະເຂົ້າຫາ WISe?

ທ່ານສະມາດແນະນຳລູກຂອງທ່ານໄປເອົາການກວດກັ່ນເບິ່ງ WISe ໄດ້ໃນ **ທຸກໆເວລາ** ພໍ່ແມ່ສາມາດລິເລີ້ມການປິ່ນປົວ, ແຕ່ວ່າຫລັງຈາກອາຍຸ 13 ປີ, ລູກຕ້ອງໄດ້ຍິນຍອມເຫັນພ້ອມນຳການປິ່ນປົວ. ທ່ານຄວນຈະພິຈາຣະນາເບິ່ງການແນະນຳລູກຂອງທ່ານໄປເອົາການກວດກັ່ນເບິ່ງ WISe ຖ້າຫາກວ່າເຂົາເຈົ້າແມ່ນ:

- ຜູ້ໃຊ້ສາຍໂທພາວະເດືອດຮ້ອນ ຫລື ຫ້ອງສຸກເສີນຢ ເລື້ອຍໆ,ຍ້ອນຄວາມຫ່ວງໃຍນຳສຸຂະພາບໂຣກຈິດ ຂອງລູກຂອງທ່ານ.
- ການພົບກັບຍາກທີ່ຈະເຂົ້າໃຈໃນການປະພຶດ (ເຊັ່ນວ່າ ການແລ່ນໜີຈາກບ້ານ ແລະ ການຖືກຈັບຢູ່ເລື້ອຍໆຊຶ່ງ ເປັນຍ້ອນສຸຂະພາບໂຣກຈິດ) ຊຶ່ງເປັນບັນຫາສຳລັບທ່ານ, ຜູ້ເບິ່ງແຍງດູແລຄົນອື່ນ, ຫລື ຜູ້ບຳບັດໂຣກ/ນາຍໝໍຄລີນິກ, ແລະ ການບໍຣິການທັມມະດາຊ່ວຍເຫລືອບໍ່ໄດ້.
- ການສະແດງໃຫ້ເຫັນການສ່ຽງອັນຕະຣາຍທີ່ຮ້າຍແຮງ ຂື້ນໄປຕໍ່ເຂົາເຈົ້າເອງ ຫລື ຄົນອື່ນ.
- ຢູ່ໃນຄວາມຕ້ອງການໃນວິທີການປິ່ນປົວທີ່ເຂັ້ມຂົ້ນ ແລະ ສ່ວນຕົວຫລາຍກວ່າເກົ່າອີກ.
- ຢູ່ໃນຄວາມຕ້ອງການໃນວິທີການທີ່ປ່ຽນແປງໄປມາງ່າຍໆ ແລະ ທຳງານໄດ້ດີກວ່າເກົ່າ.
- ທີ່ກ່ຽວພັນນຳຣະບົບຫລາຍໆຢ່າງ (ເຊັ່ນວ່າ, ຄວາມສຸກທຸກ ຂອງເດັກນ້ອຍ (CPS), ຄວາມຍຸຕິທັມຂອງວັຍຣຸ່ນ, ພະແນກຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ, ແລະ/ຫລື ການປິ່ນປົວການຕິດຢາເສບຕິດ) ແລະ ຣະບົບກຳລັງບົກບືນທີ່ຈະອູ້ມຊູລູກຂອງທ່ານຢູ່.
- ຢູ່ໃນການສຶກສາພິເສດ ແລະ/ຫລື ມີແຜນການ 504 Plan, ທີ່ມີການໂຈະບໍ່ໃຫ້ມາເຂົ້າໂຮງຮຽນຫລາຍໆເທື່ອຍ້ອນບັນ ຫາສຸຂະພາບໂຣກຈິດ ແລະ/ຫລື ການປະພຶດ.

Washington State
Department of Social & Health Services
*Transforming lives*

## ເມື່ອໃດ WISe ຈະມີໄວ້ໃຫ້ຢູ່ໃນຊຸມນຸມຊົນຂອງຂ້ອຍ?

WISe ກຳລັງຈະຖືກເປີດດຳເນີນການທົ່ວຣັດວໍຊິງຕັນໄປຮອດເດືອນຈູນ2018;ເພາະສະນັ້ນແລ້ວມັນອາດຈະບໍ່ທັນມີໄວ້ໃຫ້ໃຊ້ໄດ້ເທື່ອຢູ່ໃນພາກສ່ວນຂອງຣັດຂອງທ່ານ. ການສົ່ງຕໍ່ໄປເອົາການກວດກັ່ນເບິ່ງຂອງ WISe ສາມາດຖືກເຮັດໄດ້ໃນທຸກໆເວລາຢູ່ໃນເທສບານທີ່ໄດ້ວາງໃຊ WISe. ຣີສເ ແລ້ວ. ເພື່ອຈະຊອກຮູ້ເບິ່ງວ່າ WISe ມີໄວ້ໃຫ້ໃຊ້ຢູ່ບ່ອນທີ່ທ່ານອາສັຍຢູ່ຫລືບໍ່ ແລະ ຈະຕິດຕໍ່ຫາໃຜຈົ່ງໄປທີ່: [www.dshs.wa.gov/dbhr/cbh-wise.shtml](www.dshs.wa.gov/dbhr/cbh-wise.shtml) ແລະບົບໃສ່ເອກສານ "WISe Referral Contact List by County" document.

ຖ້າຫາກວ່າ WISe ຍັງບໍ່ທັນມີໄວ້ໃຫ້ເທື່ອຢູ່ໃນພາກສ່ວນຂອງຣັດຂອງທ່ານ, ແລະ ທ່ານເຊື່ອວ່າລູກຂອງທ່ານຈະໄດ້ຜົນປະໂຍດຈາກການບໍຣິການສຸຂະພາບໂຣກຈິດ,ຈົ່ງໃຊ້ຣາຍຣະອຽດຕິດຕໍ່ທີ່ຖືກພົບເຫັນຢູ່ໃນແວບໄຊທ໌ນີ້: [https://www.dshs.wa.gov/bha/division-behavioral-health-and-recovery/mental-health-services-and-information](https://www.dshs.wa.gov/bha/division-behavioral-health-and-recovery/mental-health-services-and-information) ເພື່ອຈະທຳການສົ່ງຕໍ່, ຫລື ໂທຫາສາຍໂທຟຣີ Recovery Helpline, ຊ່ວຍເຫລືອການພັກຟື້ນ,ໄດ້ທີ່ເລກໂທຟຣ 866-789-1511.

## ແມ່ນຫຍັງຈະເກີດຂື້ນເມື່ອຂ້ອຍໄດ້ເຮັດການແນະນຳສົ່ງຕໍ່ແລ້ວ?

ການແນະນຳສົ່ງຕໍ່ທຸກໆເທື່ອຈະເປັນຜົນໃຫ້ມີການກວດກັ່ນເບິ່ງຂອງ WISe. ການກວດກັ່ນເບິ່ງຂອງ WISe ຕ້ອງຖືກສະເນີໃຫ້ພາຍໃນ 10 ວັນເຮັດການຂອງການໄດ້ຮັບການແນະນຳສົ່ງຕໍ່. ການກວດກັ່ນເບິ່ງຂອງ WISe ທຸກໆອັນລວມເອົາ:

- ການເກັບກຳເອົາຣາຍຣະອຽດ, ເພື່ອຈະເຮັດການກວດ ກັ່ນເບິ່ງຄວາມຕ້ອງການ ແລະ ຄວາມເຂັ້ມແຂງຂອງເດັກ ວັຍຣຸ່ນ (CANS) ຊຶ່ງປະກອບດ້ວຍຊຸດຄຳຖາມຍ່ອຍຈຳນວນ 26 ຄຳຖາມ. ການກວດກັ່ນເບິ່ງອັນນີ້ຈະພິຈາຣະນາເບິ່ງ ວ່າມັນຈະປາກົດວ່າລູກຂອງທ່ານສາມາດໄດ້ຮັບຜົນປະໂຍດ ຈາກຣະດັບຂອງການປິ່ນປົວທີ່ WISe ເອື້ອເຟື້ອໃຫ້ ຫລື ບໍ່. ເຄື່ອງມືຂອງການກວດກັ່ນເບິ່ງອັນນີ້ສາມາດຖືກເຮັດໃຫ້ ແລ້ວໄດ້ໂດຍທາງໂທຣະສັບ ຫລື ໂດຍຕົນເອງ.
- ເມື່ອເວລາເຄື່ອງມືຂອງການກວດກັ່ນເບິ່ງສະແດງໃຫ້ເຫັນວ່າ WISe ສາມາດມີຜົນປະໂຍດໃຫ້ແກ່ລູກຂອງທ່ານໄດ້ຢ່າງ ເປັນໄປໄດ້, ລູກຂອງທ່ານຈະຖືກແນະນຳສົ່ງຕໍ່ໄປຫາຫ້ອງການ WISe ເພື່ອການຕີຣາຄາຈິດຊຶ່ເຂົ້າສາມາດຖືກເຮັດໃຫ້ແລ້ວ.ແລ້ວຫ້ອງການຂອງທ່ານຫມໍ WISe ຈະແຕ່ງຕັ້ງຄະນະທີມງານໃຫມ່ໃຫ້ລູກຂອງທ່ານແລະການປິ່ນປົວທຸກໆຢ່າງຈະຖືກປະສານງານຜ່ານຫ້ອງການ/ຄະນະທີມງານ.
- ຖ້າຫາກວ່າມັນຖືກພິຈາຣະນາເຫັນວ່າລູກຂອງທ່ານ ບໍ່ປາກົດ ວ່າຈະຕອບສະນອງຣະດັບຂອງການປິ່ນປົວທີ່ WISe ເອົາໃຫ້, ເຂົາເຈົ້າຈະຖືກສົ່ງຕໍ່ໄປຫາການບໍຣິການສຸຂະພາບໂຣກຈິດ ບ່ອນອື່ນໆ, ຕາມທີ່ເຫມາະສົມ, ເພື່ອຈະໃຫ້ຄວາມຕ້ອງການ ຂອງເຂົາຖືກແກ້ໄຂ.



ທຸກໆຄອບຄົວແມ່ນແຕກຕ່າງກັນ.
ການແກ້ໄຂທຸກໆອັນແມ່ນສ່ວນບຸກຄົນ.

## ຕ້ອງການຢາກຈະພົວພັນນຳບໍ່?

ປາກສຽງຂອງທ່ານສາມາດສົ່ງເສີມການບໍຣິການສຳລັບເດັກນ້ອຍແລະຊາວຫນຸ່ມ. Family, Youth, System Partner Round Tables (FYSPRTs) ເປັນພາກສ່ວນສຳຄັນຂອງໂຄງຮ່າງປົກຄອງທີ່ເຮັດວຽກເພື່ອຈະທຳການປັບປຸງແກ້ໄຂໃສ່ຣະບົບປິ່ນປົວສຸຂະພາບການປະພຶດຂອງເດັກນ້ອຍ, ລວມທັງໂຄງການ WISe ຮຽນຮູ້ເພີ້ມເຕີມໄດ້ຢູ່ທີ່ນີ້: [FYSPRT.com](FYSPRT.com)

### *Washington's Wraparound with Intensive Services (WISe)

ພາບລວມຂອງຄະດີຟ້ອງຂື້ນສານ **T.R. et al. v. Kevin Quigley and Dorothy Teeter**

ໃນເດືອນໂນເວັມເບີ 2009, ການຟ້ອງຂື້ນສານຂອງ Medicaid ໄດ້ຍື່ນຖືກຍື່ນ (ເອີ້ນຊື່ມາແຕ່ກ່ອນວ່າ T.R. v. Dreyfus) ຕໍ່ຕ້ານກົມ Department of Social and Health Services ແລະ Health Care Authority ກ່ຽວກັບການປິ່ນປົວສຸຂະພາບໂຣກຈິດທີ່ເຂັ້ມງວດສຳລັບເດັກນ້ອຍ ແລະ ຊາວຫນຸ່ມ. ການຟ້ອງຂື້ນສານໄດ້ຖືກອີງໃສ່ກົດຫມາຍ EPSDT (Early and Periodic Screening, Diagnosis and Treatment) ຂອງຣັດຖະບານກາງຊຶ່ງບັງໃຫ້ຣັດເອົາການບໍຣິການ ແລະ ການປິ່ນປົວສຸຂະພາບໂຣກຈິດໃຫ້ແກ່ເດັກນ້ອຍຜູ້ທີ່ຕ້ອງການ, ເຖິງແມ່ນວ່າການບໍຣິການປິ່ນປົວບໍ່ເຄີຍຖືກເອົາໃຫ້ຈັກເທື່ອໃນຜ່ານມາ. ຫລັງຈາກການໄກ່ເກັ່ຽກັນມາຫລາຍໆປີ, ທັງສອງຝ່າຍໄດ້ຕົກລົງເຫັນພ້ອມນຳກັນໃນແຜນການທີ່ເຂົາເຈົ້າເຊື່ອວ່າຈະເຮັດໃຫ້ເຂົາເຈົ້າເຮັດໃຫ້ເຂົາເຈົ້າສອດຄ່ອງນຳກົດຫມາຍ, ແລະສິ່ງທີ່ສຳຄັນທີ່ສຸດ, ເຮັດວຽກໃຫ້ຊາວຫນຸ່ມ ແລະ ຄອບຄົວຢູ່ໃນຣັດວໍຊິງຕັນ. ສານຂອງຣັດຖະບານກາງໄດ້ອະນຸມັດການຕົກລົງກັນອັນນີ້ໃນເດືອນດີເຊັມເບີ 19, 2013. ຈຸດເປົ້າຫມາຍຂອງການຕົກລົງສັນຍາກັນອັນນີ້ແມ່ນເພື່ອຈະພັດທະນາຂະຍາຍຣະບົບທີ່ໃຫ້ການປິ່ນປົວສຸຂະພາບໂຣກຈິດເຂັ້ມງວດຢູ່ໃນສະພາບແວດລ້ອມຄືເຮືອນ ແລະ ຊຸມນຸມຊົນທີ່ໃຊ້ການໄດ້ສຳລັບຊາວຫນຸ່ມຜູ້ທີ່ມີເງື່ອນໄຂໄດ້ຮັບສູງເຖິງອາຍຸ 21 ປີ.